ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ

ເລກທີ 0150 /ທສວ

ນະຄອນຫຼວງວຽງຈັນ, ວັນທີ ...14... ກຸມພາ 2025

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ບໍລິສັດ ...........................................

1. ກະຊວງອຸດສາຫະກຳ ແລະ ການຄ້າ ຕາງໜ້າໂດຍ ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ໄດ້ຮັບອະນຸມັດງົບປະມານ ປະຈຳປີ 2025 ໃນການສ້ອມແປງລົດ. ຂໍເຊີນບັນດາບໍລິສັດ/ວິສາຫະກິດ/ຫ້າງຮ້ານ ທີ່ດຳເນີນກິດຈະການ ສ້ອມແປງ ແລະ ຂາຍອາໄລ່ລົດຍົນ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຮ່ວມປະມູນ ສ້ອມແປງລົດກະບະ ເຊບໂຣເລດ ກກ 7101 ຊຶ່ງການປະມູນຄັ້ງນີ້ເປັນການປະມູນຮູບແບບການສົມທຽບລາຄາ.
2. ທສວ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການ ສ້ອມແປງລົດ ໄລຍະເວລາຍື່ນຊອງປະມູນແມ່ນ ...17... ກຸມພາ ຫາ 04... ມີນາ 2025.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດຂອງກະຊວງການເງິນສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງຂອງ ວັນທີ 04.. ມີນາ 2025 ຢູ່ຫ້ອງປະຊຸມຊັ້ນ 02, ຫ້ອງ 201 ຂອງສຳນັກງານສົ່ງເສີມ ຈນກ ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:10 ໂມງຂອງວັນດຽວກັນ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຜູ້ອຳນວຍການກອງທຶນ

ປອ. ບຸນເພັງ ສີບຸນເຮືອງ